ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ ເລກທີ 256 /ທຫລ

ນະຄອນຫຼວງວຽງຈັນ, ວັນທີ 13 ພຶດສະພາ 2021

# ຂໍ້ຕົກລົງເພີ່ມເຕີມ
# ວ່າດ້ວຍການປະຕິບັດນະໂຍບາຍສິນເຊື່ອເພື່ອແກ້ໄຂຜົນກະທົບຈາກສະພາບການລະບາດຂອງພະຍາດອັກເສບປອດຈາກເຊື້ອຈຸລະໂລກສາຍພັນໃໝ່ (COVID–19)

- ອີງຕາມ ກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ (ສະບັບປັບປຸງ) ສະບັບເລກທີ 47/ສພຊ, ລົງວັນທີ 19 ມິຖຸນາ 2018;
- ອີງຕາມ ຂໍ້ຕົກລົງວ່າດ້ວຍນະໂຍບາຍສິນເຊື່ອ ເພື່ອແກ້ໄຂຜົນກະທົບຈາກສະພາບການລະບາດຂອງພະຍາດອັກເສບປອດຈາກເຊື້ອຈຸລະໂລກສາຍພັນໃໝ່ (COVID–19) ສະບັບເລກທີ 238/ທຫລ, ລົງວັນທີ 26 ມີນາ 2020;
- ອີງໃສ່ສະພາບການລະບາດຂອງພະຍາດອັກເສບປອດຈາກເຊື້ອຈຸລະໂລກສາຍພັນໃໝ່ (COVID-19) ໃນຮອບທີ 2 ເລີ່ມແຕ່ເດືອນ ເມສາ 2021 ເປັນຕົ້ນມາ.

**ຜູ້ວ່າການທະນາຄານແຫ່ງ ສປປ ລາວ ຕົກລົງ:**

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດນະໂຍບາຍສິນເຊື່ອເພີ່ມເຕີມ ເພື່ອແກ້ໄຂຜົນກະທົບຈາກສະພາບການລະບາດຂອງພະຍາດອັກເສບປອດຈາກເຊື້ອຈຸລະໂລກສາຍພັນໃໝ່ ໃຫ້ແກ່ລູກຄ້າເງິນກູ້ຂອງທະນາຄານທຸລະກິດ ແລະ ສະຖາບັນການເງິນ ທີ່ເປັນພະນັກງານ ຫຼື ລູກຈ້າງ ຂອງຫົວໜ່ວຍທຸລະກິດ ຫຼື ການຈັດຕັ້ງໃດໜຶ່ງ ທີ່ຕ້ອງໄດ້ຢຸດກິດຈະການທັງໝົດ ຫຼື ບາງສ່ວນ ລວມທັງແຮງງານອິດສະຫຼະທີ່ບໍ່ສາມາດສ້າງລາຍຮັບ ເນື່ອງຈາກໄດ້ຮັບຜົນກະທົບຈາກການແຜ່ລະບາດຂອງພະຍາດດັ່ງກ່າວ ພາໃຫ້ບໍ່ໄດ້ຮັບເງິນເດືອນ ຫຼື ໄດ້ຮັບເງິນເດືອນສ່ວນໃດໜຶ່ງ ຊຶ່ງບໍ່ສາມາດຊຳລະໜີ້ຂອງຕົນໃຫ້ແກ່ ທະນາຄານ ແລະ ສະຖາບັນການເງິນ ໄດ້ຕາມສັນຍາ.

**ມາດຕາ 2 ນະໂຍບາຍເພີ່ມເຕີມ ມາດຕາ 3 ຂອງ ຂໍ້ຕົກລົງ 238/ທຫລ, ລົງວັນທີ 26 ມີນາ 2020**

ນອກຈາກນະໂຍບາຍທີ່ໄດ້ກຳນົດໃນມາດຕາ 3 ຂອງຂໍ້ຕົກລົງ 238/ທຫລ, ລົງວັນທີ 26 ມີນາ 2020 ໃຫ້ທະນາຄານທຸລະກິດ ແລະ ສະຖາບັນການເງິນປະຕິບັດນະໂຍບາຍເພີ່ມເຕີມຕໍ່ລູກຄ້າຂອງຕົນດັ່ງນີ້:

- ໃຫ້ທະນາຄານທຸລະກິດ, ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ ແລະ ບໍ່ຮັບເງິນຝາກ ເລື່ອນເວລາຊຳລະໜີ້ທັງຕົ້ນທຶນ ແລະ ດອກເບ້ຍໃຫ້ແກ່ລູກຄ້າເງິນກູ້ (ປະເພດເງິນກູ້ເພື່ອການຊົມໃຊ້) ເປັນເວລາ 3 ເດືອນ ນັບແຕ່ເດືອນພຶດສະພາ ຫາ ເດືອນກໍລະກົດ 2021 ຕາມເງື່ອນໄຂທີ່ໄດ້ກຳນົດໃນມາດຕາ 3 ຂອງຂໍ້ຕົກລົງສະບັບນີ້;

– ໃຫ້ບໍລິສັດເຊົ່າສິນເຊື່ອ ແລະ ໂຮງຊວດຈຳ ເລື່ອນກຳນົດເວລາໃນການຈ່າຍຄ່າງວດໃນການເຊົ່າຊື້ ຫຼື ກຳນົດເວລາການໄຖ່ຖອນຊັບຊວດຈຳເປັນເວລາ 3 ເດືອນ ນັບແຕ່ເດືອນພຶດສະພາ ຫາ ເດືອນ ກໍລະກົດ 2021 ຕາມເງື່ອນໄຂທີ່ໄດ້ກຳນົດໃນມາດຕາ 3 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 3 ເງື່ອນໄຂໃນການພິຈາລະນາ**

ໃນການພິຈາລະນາ ເລື່ອນກຳນົດເວລາຊຳລະໜີ້ ມີດັ່ງນີ້:

– ລູກຄ້າທີ່ຈະໄດ້ຮັບນະໂຍບາຍເລື່ອນເວລາຊຳລະໜີ້ຕ້ອງແມ່ນຜູ້ທີ່ໄດ້ຮັບຜົນກະທົບຈາກການລະບາດຂອງພະຍາດ COVID-19 ພາໃຫ້ບໍ່ໄດ້ຮັບເງິນເດືອນ ຫຼື ຄ່າແຮງງານ ຫຼື ໄດ້ຮັບພຽງສ່ວນໃດໜຶ່ງພາໃຫ້ບໍ່ສາມາດຊຳລະໜີ້ ຫຼື ຄ່າງວດໄດ້ ໂດຍມີການຢັ້ງຢືນຈາກບ່ອນເຮັດວຽກດັ່ງກ່າວ;
– ສຳລັບລູກຄ້າທີ່ມີແຫຼ່ງລາຍຮັບຈາກການດຳເນີນທຸລະກິດ ທີ່ໄດ້ຮັບຜົນກະທົບຈາກພະຍາດ COVID-19 ແມ່ນໃຫ້ພິຈາລະນາຕາມຖານະການເງິນ ແລະ ສະພາບຕົວຈິງ.

**ມາດຕາ 4 ການຈັດຕັ້ງປະຕິບັດ**

ກົມຄຸ້ມຄອງທະນາຄານທຸລະກິດ ແລະ ກົມຄຸ້ມຄອງສະຖາບັນການເງິນ ມີໜ້າທີ່ຕິດຕາມກວດກາການຈັດຕັ້ງປະຕິບັດນະໂຍບາຍທີ່ກຳນົດໃນຂໍ້ຕົກລົງສະບັບນີ້ ຂອງທະນາຄານທຸລະກິດ ແລະ ສະຖາບັນການເງິນທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງຕົນ ແລະ ສັງລວມລາຍງານສະພາບການຈັດຕັ້ງປະຕິບັດດັ່ງກ່າວ ໃຫ້ແກ່ຄະນະຜູ້ວ່າການຊາບເປັນແຕ່ລະເດືອນ ຢ່າງເປັນປົກກະຕິ.

ທະນາຄານທຸລະກິດ ແລະ ສະຖາບັນການເງິນ ຕ້ອງປະຕິບັດນະໂຍບາຍສິນເຊື່ອຕໍ່ລູກຄ້າເງິນກູ້ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 2 ຂອງຂໍ້ຕົກລົງສະບັບນີ້. ລູກຄ້າເງິນກູ້ ທີ່ມີເງື່ອນໄຂຕາມທີ່ກຳນົດໄວ້ໃນມາດຕາ 3 ຂອງຂໍ້ຕົກລົງສະບັບນີ້ ສາມາດແຈ້ງຂໍຮັບນະໂຍບາຍສິນເຊື່ອຈາກທະນາຄານທຸລະກິດ ແລະ ສະຖາບັນການເງິນທີ່ເປັນເຈົ້າໜີ້ຂອງຕົນ ໂດຍເຮັດໜັງສືສະເໜີຂໍນະໂຍບາຍເປັນລາຍລັກອັກສອນ ຫຼື ຜ່ານຊ່ອງທາງອື່ນຕາມການກຳນົດຂອງທະນາຄານທຸລະກິດ ແລະ ສະຖາບັນການເງິນ ພ້ອມທັງ ປະກອບເອກະສານຢັ້ງຢືນກ່ຽວກັບການເລີກຈ້າງ, ການຢຸດເຊົາການຈ່າຍເງິນເດືອນຊົ່ວຄາວ ຫຼື ການຈ່າຍເງິນເດືອນບາງສ່ວນ ເພື່ອເປັນຂໍ້ມູນໃນການພິຈາລະນາປະຕິບັດນະໂຍບາຍ.

ຫ້າມທະນາຄານທຸລະກິດ ແລະ ສະຖາບັນການເງິນ ຍຶດຫຼັກຊັບຄ້ຳປະກັນ, ປັບໃໝ ແລະ ເກັບຄ່າທຳນຽມຕ່າງໆໃນການປະຕິບັດນະໂຍບາຍຕາມຂໍ້ຕົກລົງສະບັບນີ້.

ທະນາຄານທຸລະກິດ ແລະ ສະຖາບັນການເງິນ ຕ້ອງແຈ້ງໃຫ້ລູກຄ້າຂອງຕົນຊາບຢ່າງທົ່ວເຖິງຜ່ານເວັບໄຊ້ ຫຼື ຊ່ອງທາງອື່ນທີ່ເໝາະສົມ ກ່ຽວກັບການປະຕິບັດນະໂຍບາຍຕາມຂໍ້ຕົກລົງສະບັບນີ້. ພ້ອມທັງເອົາໃຈໃສ່ໃນການຕິດຕາມກວດກາສິນເຊື່ອທີ່ໄດ້ຮັບນະໂຍບາຍດັ່ງກ່າວຢ່າງໃກ້ຊິດ ແລະ ລາຍງານມາຍັງກົມຄຸ້ມຄອງທະນາຄານທຸລະກິດ ແລະ ກົມຄຸ້ມຄອງສະຖາບັນການເງິນ ທະນາຄານແຫ່ງ ສປປ ລາວ ພາຍໃນວັນທີ 10 ຂອງແຕ່ລະເດືອນຕາມແບບຟອມທີ່ກຳນົດ.

ກໍລະນີລູກຄ້າຕ້ອງການຂໍ້ມູນເພີ່ມເຕີມກ່ຽວກັບການປະຕິບັດນະໂຍບາຍສິນເຊື່ອຕາມທີ່ກຳນົດໃນຂໍ້ຕົກລົງສະບັບນີ້ ຫຼື ຂໍ້ຕົກລົງວ່າດ້ວຍນະໂຍບາຍສິນເຊື່ອ ເພື່ອແກ້ໄຂຜົນກະທົບຈາກສະພາບການລະບາດຂອງ

ພະຍາດອັກເສບປອດຈາກເຊື້ອຈຸລະໂລກສາຍພັນໃໝ່ (COVID–19) ສະບັບເລກທີ 238/ທຫລ, ລົງວັນທີ 26 ມີນາ 2020 ສາມາດຕິດຕໍ່ມາຍັງ ກົມຄຸ້ມຄອງທະນາຄານທຸລະກິດ ເບີໂທຕິດຕໍ່ 021 219825 ແລະ ກົມຄຸ້ມຄອງສະຖາບັນການເງິນ ເບີໂທຕິດຕໍ່ 021 **265 715.**

**ມາດຕາ 5 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບຕັ້ງແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ຜູ້ວ່າການທະນາຄານແຫ່ງ ສປປ ລາວ**

ທະນາຄານແຫ່ງ ສ.ປ.ປ.ລ ຜູ້ວ່າການ

**ສອນໄຊ ສິດພະໄຊ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານ
ເບີໂທ:

## ລາຍງານເງິນກູ້ ທີ່ຖືກຜົນກະທົບຈາກສະພາບການລະບາດຂອງພະຍາດອັກເສບປອດຈາກເຊື້ອຈຸລະໂລກ ສາຍພັນໃໝ່ (Covid-19)

ປະຈຳເດືອນ.......

**ຕາຕະລາງ 1: ແບບຟອມລາຍງານເງິນກູ້ທັງໝົດ ທີ່ໄດ້ຮັບນະໂຍບາຍສິນເຊື່ອ ຕັ້ງແຕ່ປີ 2020 ຮອດປະຈຸບັນ.**

**ຫົວໜ່ວຍ: ເຕັມ** **ຫົວໜ່ວຍ: ເຕັມ** **ຫົວໜ່ວຍ: ເຕັມ**

| 1 | 2 | 3 | | | | | 4 | 5 | 6 | | 7 | 8 | 9 | | | | | 10 | | | | | | | | | | 11 | | | | | 12 | 13 | 14 | | | | | | | | 15 | 16 | 17 |
|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|
| ລຳດັບ | ຊື່ລູກຄ້າ | ວົງເງິນອະນຸມັດ | | | | | ສຳນັກງານໃຫຍ່ ຫຼື ສາຂາ | ອັດຕາດອກເບ້ຍ (%) | ຄ່າທຳນຽມ | | ເປົ້າໝາຍການນຳໃຊ້ເງິນກູ້ (ລະບຸໃຫ້ຊັດເຈນ) | ປະເພດທຸລະກິດ (ລະບຸໃຫ້ຊັດເຈນ) | ຍອດເຫຼືອທ້າຍເດືອນກ່ອນ | | | | | ການເຄື່ອນໄຫວທີ່ເກີດຂຶ້ນໃນເດືອນ | | | | | ການເຄື່ອນໄຫວທີ່ເກີດຂຶ້ນໃນເດືອນ | | | | | ຍອດເຫຼືອທ້າຍເດືອນນີ້ | | | | | ຈັດຊັ້ນໜີ້ | ຍອດເຫຼືອດອກເບ້ຍລວມທັງໝົດທຽບເທົ່າກີບ | ນະໂຍບາຍທີ່ມີຕໍ່ລູກຄ້າ | | | | | | | | ໝາຍເຫດ (ໃນກໍລະນີ ຢູ່ໃນຂັ້ນຕອນພິຈາລະນາ ແມ່ນໃຫ້ໃສ່ A) | ຂະແໜງເສດຖະກິດ | ຂະໜາດວິສາຫະກິດ |
| | | ກີບ | ໂດລາ | ບາດ | ເງິນຕາຕ່າງປະເທດສະກຸນອື່ນທຽບເທົ່າກີບ | ລວມທັງໝົດທຽບເທົ່າກີບ | | | ອະນຸມັດເງິນກູ້ (%) | ຕັດແກ່ສັນຍາ (%) | | | ກີບ | ໂດລາ | ບາດ | ເງິນຕາຕ່າງປະເທດສະກຸນອື່ນທຽບເທົ່າກີບ | ລວມທັງໝົດທຽບເທົ່າກີບ | ໜີ້ | | | | | ມີ | | | | | ກີບ | ໂດລາ | ບາດ | ເງິນຕາຕ່າງປະເທດສະກຸນອື່ນທຽບເທົ່າກີບ | ລວມທັງໝົດທຽບເທົ່າກີບ | | | ເລື່ອນເວລາການຊຳລະໜີ້ (ຈຳນວນເງິນ) | | | | ປັບອັດຕາດອກເບ້ຍ (%) | ປັບຫຼຸດຄ່າທຳນຽມ (%) (ຈາກ.....ມາເປັນ.....) | ປ່ອຍໃໝ່ ເພື່ອຟື້ນຟູການຜະລິດ ຫຼື ທຸລະກິດ/ເສີມສະພາບຄ່ອງ | ອື່ນໆ | | | |
| | | | | | | | | | | | | | | | | | | ກີບ | ໂດລາ | ບາດ | ເງິນຕາຕ່າງປະເທດສະກຸນອື່ນທຽບເທົ່າກີບ | ລວມທັງໝົດທຽບເທົ່າກີບ | ກີບ | ໂດລາ | ບາດ | ເງິນຕາຕ່າງປະເທດສະກຸນອື່ນທຽບເທົ່າກີບ | ລວມທັງໝົດທຽບເທົ່າກີບ | | | | | | | | ຕົ້ນທຶນ | | ດອກເບ້ຍ | | | | | | | | |
| | | | | | | | | | | | | | | | | | | | | | | | | | | | | | | | | | | | ຈຳນວນເງິນ | ໄລຍະເວລາ (ຈຳນວນເດືອນ) | ຈຳນວນເງິນ | ໄລຍະເວລາ (ຈຳນວນເດືອນ) | | | | | | | |
| I | ເງິນກູ້ໃຫ້ແກ່ບຸກຄົນ | | | | | | | | | | | | | | | | | | | | | | | | | | | | | | | | | | | | | | | | | | | | |
| 1 | | | | | | | | | | | | | | | | | | | | | | | | | | | | | | | | | | | | | | | | | | | | | |
| 2 | ............................... | | | | | | | | | | | | | | | | | | | | | | | | | | | | | | | | | | | | | | | | | | | | |
| 3 | ............................... | | | | | | | | | | | | | | | | | | | | | | | | | | | | | | | | | | | | | | | | | | | | |
| 4 | ............................... | | | | | | | | | | | | | | | | | | | | | | | | | | | | | | | | | | | | | | | | | | | | |
| 5 | ............................... | | | | | | | | | | | | | | | | | | | | | | | | | | | | | | | | | | | | | | | | | | | | |
| 6 | ............................... | | | | | | | | | | | | | | | | | | | | | | | | | | | | | | | | | | | | | | | | | | | | |
| ລວມ | | - | - | - | - | - | | | | | | | - | - | - | - | - | - | - | - | - | - | - | - | - | - | - | - | - | - | - | - | | - | | | | | | | | | | | |
| II | ເງິນກູ້ໃຫ້ແກ່ນິຕິບຸກຄົນ | | | | | | | | | | | | | | | | | | | | | | | | | | | | | | | | | | | | | | | | | | | | |
| 1 | ............................... | | | | | | | | | | | | | | | | | | | | | | | | | | | | | | | | | | | | | | | | | | | | |
| 2 | ............................... | | | | | | | | | | | | | | | | | | | | | | | | | | | | | | | | | | | | | | | | | | | | |
| 3 | ............................... | | | | | | | | | | | | | | | | | | | | | | | | | | | | | | | | | | | | | | | | | | | | |
| 4 | ............................... | | | | | | | | | | | | | | | | | | | | | | | | | | | | | | | | | | | | | | | | | | | | |
| 5 | ............................... | | | | | | | | | | | | | | | | | | | | | | | | | | | | | | | | | | | | | | | | | | | | |
| 6 | ............................... | | | | | | | | | | | | | | | | | | | | | | | | | | | | | | | | | | | | | | | | | | | | |
| ລວມ | | - | - | - | - | - | | | | | | | - | - | - | - | - | - | - | - | - | - | - | - | - | - | - | - | - | - | - | - | | - | | | | | | | | | | | |
| ລວມທັງໝົດ | | - | - | - | - | - | | | | | | | - | - | - | - | - | - | - | - | - | - | - | - | - | - | - | - | - | - | - | - | | - | | | | | | | | | | | |

ໝາຍເຫດ:

1. ຖັນທີ (8) ປະເພດທຸລະກິດ ໝາຍເຖິງທຸລະກິດຂອງລູກໜີ້ ເຊັ່ນ: ໂຮງແຮມ, ຮ້ານອາຫານ, ຮ້ານບັນເທີງ, ຮ້ານຄາຣາໂອເກະ, ຮ້ານບໍລິການນວດ-ສະປາ, ສະຖານທີ່ອອກກຳລັງກາຍ-ຫຼິ້ນກິລາໃນຮົ່ມ, ໂຮງຮູບເງົາ, ຮ້ານຕັດຜົມ, ຮ້ານເສີມສວຍ, ສູນການຄ້າ, ຮ້ານຄ້າຂາຍຍົກ-ຮ້ານຄ້າຂາຍຍ່ອຍ, ຮ້ານຊຸບເປີມາເກັດ, ຮ້ານກາເຟ, ຮ້ານສ້ອມແປງລົດ, ຮ້ານລ້າງອັດສີດ, ໂຮງງານ
2. ຖັນທີ (14) ນະໂຍບາຍທີ່ມີຕໍ່ລູກໜີ້ ໝາຍເຖິງນະໂຍບາຍທີ່ທະນາຄານປະຕິບັດຕາມຂໍ້ຕົກລົງເລກທີ 238/ທຫລ, ລົງວັນທີ 26 ມີນາ 2020. ຖັນດັ່ງກ່າວ ປະກອບມີຂໍ້ມູນ ແລະ ການລະບຸຂໍ້ມູນ ຄື: ການເລື່ອນເວລາຊຳລະໜີ້ ຕົ້ນທຶນ ແລະ ດອກເບ້ຍ (ຕົ້ນທຶນ ແລະ ດອກເບ້ຍ ແມ່ນລະບຸຂໍ້ມູນຈຳນວນ ເງິນທີ່ທະນາຄານເຫັນດີໃຫ້ເລື່ອນຊຳລະ ແລະ ລະບຸໄລຍະເວລາການເລື່ອນເປັນຈຳນວນເດືອນ, ການປັບອັດຕາດອກເບ້ຍ ແມ່ນລະບຸຂໍ້ມູນອັດຕາດອກເບ້ຍທີ່ທະນາຄານປັບຫຼຸດໃຫ້ແກ່ລູກໜີ້, ການປັບຫຼຸດຄ່າທຳນຽມ ແມ່ນລະບຸຂໍ້ມູນອັດຕາຄ່າທຳນຽມເປັນເປີເຊັນທີ່ທະນາຄານຄິດໄລ່ກັບລູກຄ້າ, ປ່ອຍໃໝ່ ເພື່ອຟື້ນຟູການຜະລິດ ຫຼື ທຸລະກິດ/ເສີມສະພາບຄ່ອງ ແມ່ນລະບຸຂໍ້ມູນຕາມເນື້ອໃນໃດໜຶ່ງດັ່ງກ່າວ ແລະ ລະບຸຂໍ້ມູນອື່ນໆ ທີ່ເຫັນວ່າທະນາຄານໄດ້ປະຕິບັດນະໂຍບາຍແກ່ລູກໜີ້ ທີ່ສອດຄ່ອງຕາມຂໍ້ຕົກລົງເລກທີ 238/ທຫລ.
3. ຖັນທີ (15) ຫ້ອງໝາຍເຫດ: ສຳລັບລູກໜີ້ທີ່ໄດ້ຮັບຜົນກະທົບຈາກພະຍາດ COVID-19 ຊຶ່ງຢູ່ໃນຂະບວນການພິຈາລະນາ ແມ່ນໃຫ້ລະບຸຕົວອັກສອນ A . ສ່ວນລູກໜີ້ທີ່ບໍ່ໄດ້ຮັບນະໂຍບາຍຈາກທະນາຄານ ແມ່ນບໍ່ໃຫ້ລາຍງານໃນຕາຕະລາງນີ້.
4. ສ່ວນຖັນອື່ນໆ ແມ່ນລະບຸຂໍ້ມູນຕາມປຶກແນະນຳການປະກອບຂໍ້ມູນເຂົ້າແບບຟອມລາຍງານທາງການເງິນ ສະບັບເລກທີ 734/ກຄທ, ລົງວັນທີ 26 ທັນວາ 2019.
5. ຖັນທີ (13) ຍອດເຫຼືອດອກເບ້ຍ ໝາຍເຖິງ ຍອດເຫຼືອດອກເບ້ຍທີ່ລູກໜີ້ ຕ້ອງຊຳລະດອກເບ້ຍໃຫ້ທະນາຄານ ໃນມື້ປິດບັນຊີຂອງເດືອນ ຈົນຮອດມື້ສິ້ນສຸດສັນຍາ.
6. ແບບຟອມສະບັບນີ້ ໃຊ້ປ່ຽນແທນແບບຟອມລາຍງານຕາມແຈ້ງການຂອງ ກຄທ ສະບັບເລກທີ 500/ກຄທ, ລົງວັນທີ 25 ສິງຫາ 2020.

<u>ຜູ້ອຳນວຍການ</u> <u>ຫົວໜ້າພະແນກສິນເຊື່ອ</u>

ນະຄອນຫຼວງວຽງຈັນ, ວັນທີ.........
ຜູ້ລາຍງານ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ທະນາຄານ

ເປີໂທ:

**ລາຍງານເງິນກູ້ ທີ່ຖືກຜົນກະທົບຈາກສະພາບການລະບາດຂອງພະຍາດອັກເສບປອດຈາກເຊື້ອຈຸລາໂລກ ສາຍພັນໃໝ່ (Covid-19)**
**ປະຈຳເດືອນ.......**

**ຕາຕະລາງ 3: ແບບຟອມລາຍງານເງິນກູ້ ທີ່ລູກຄ້າໄດ້ຮັບນະໂຍບາຍສິນເຊື່ອ (ສະເພາະລູກຄ້າທີ່ກູ້ຢືມເພື່ອການຊົມໃຊ້)**

**ຫົວໜ່ວຍ: ເຕັມ** **ຫົວໜ່ວຍ: ເຕັມ**

| 1 | 2 | 3 | | | | | 4 | 5 | 6 | | | | | 7 | | | | | | | | | | 8 | | | | | 9 | 10 | 11 | | | | 12 |
|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|
| ລຳດັບ | ຊື່ລູກຄ້າ | ວົງເງິນອະນຸມັດ | | | | | ສຳນັກງານໃຫຍ່ ຫຼື ສາຂາ | ອັດຕາດອກເບ້ຍ (%) | ຍອດເຫຼືອທ້າຍເດືອນກ່ອນ | | | | | ການເຄື່ອນໄຫວທີ່ເກີດຂຶ້ນໃນເດືອນ | | | | | ການເຄື່ອນໄຫວທີ່ເກີດຂຶ້ນໃນເດືອນ | | | | | ຍອດເຫຼືອທ້າຍເດືອນນີ້ | | | | | ຈັດຊັ້ນໜີ້ | ຍອດເຫຼືອດອກເບ້ຍ ລວມທັງໝົດທຽບເທົ່າກີບ | ນະໂຍບາຍທີ່ມີຕໍ່ລູກຄ້າ | | | | ໝາຍເຫດ (ໃນກໍລະນີ ຢູ່ໃນຂັ້ນຕອນພິຈາລະນາ ແມ່ນໃຫ້ໃສ່ A) |
| | | | | | | | | | | | | | | | | | | | | | | | | | | | | | | | ເລື່ອນເວລາການຊຳລະໜີ້ (ຈຳນວນເງິນ) | | | | |
| | | | | | | | | | | | | | | ໜີ້ | | | | | ມີ | | | | | | | | | | | | ຕົ້ນທຶນ | | ດອກເບ້ຍ | | |
| | | ກີບ | ໂດລາ | ບາດ | ເງິນຕາຕ່າງປະເທດສະກຸນອື່ນທຽບເທົ່າກີບ | ລວມທັງໝົດທຽບເທົ່າກີບ | | | ກີບ | ໂດລາ | ບາດ | ເງິນຕາຕ່າງປະເທດສະກຸນອື່ນທຽບເທົ່າກີບ | ລວມທັງໝົດທຽບເທົ່າກີບ | ກີບ | ໂດລາ | ບາດ | ເງິນຕາຕ່າງປະເທດສະກຸນອື່ນທຽບເທົ່າກີບ | ລວມທັງໝົດທຽບເທົ່າກີບ | ກີບ | ໂດລາ | ບາດ | ເງິນຕາຕ່າງປະເທດສະກຸນອື່ນທຽບເທົ່າກີບ | ລວມທັງໝົດທຽບເທົ່າກີບ | ກີບ | ໂດລາ | ບາດ | ເງິນຕາຕ່າງປະເທດສະກຸນອື່ນທຽບເທົ່າກີບ | ລວມທັງໝົດທຽບເທົ່າກີບ | | | ຈຳນວນເງິນ | ໄລຍະເວລາ (ລະບຸຈຳນວນເດືອນ, ພ້ອມທັງລະບຸເດືອນໃດ ຫາ ເດືອນໃດ) | ຈຳນວນເງິນ | ໄລຍະເວລາ (ຈຳນວນເດືອນ, ພ້ອມທັງລະບຸເດືອນໃດ ຫາ ເດືອນໃດ) | |
| 1 | | | | | | | | | | | | | | | | | | | | | | | | | | | | | | | | | | | |
| 2 | ............................ | | | | | | | | | | | | | | | | | | | | | | | | | | | | | | | | | | |
| 3 | ............................ | | | | | | | | | | | | | | | | | | | | | | | | | | | | | | | | | | |
| 4 | ............................ | | | | | | | | | | | | | | | | | | | | | | | | | | | | | | | | | | |
| 5 | ............................ | | | | | | | | | | | | | | | | | | | | | | | | | | | | | | | | | | |
| 6 | ............................ | | | | | | | | | | | | | | | | | | | | | | | | | | | | | | | | | | |
| **ລວມທັງໝົດ** | | | | | | | | | | | | | | | | | | | | | | | | | | | | | | | | | | | |

**ໝາຍເຫດ: ແບບຟອມສະບັບນີ້ ແມ່ນສ້າງຂຶ້ນເພື່ອປະຕິບັດຕາມຂໍ້ກົນລົງເພີ່ມເຕີມ ວ່າດ້ວຍການປະຕິບັດນະໂຍບາຍສິນເຊື່ອ ເພື່ອແກ້ໄຂຜົນກະທົບຈາກພະຍາດ Covid-19 ສະບັບເລກທີ 256/ທຫລ ລົງວັນທີ 13 ເມສາ 2021.**

**ຜູ້ອຳນວຍການ** **ຫົວໜ້າພະແນກສິນເ** **ນະຄອນຫຼວງວຽງຈັນ, ວັນທີ.........**
**ຜູ້ລາຍງານ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານ

ເບີໂທ:

## ລາຍງານເງິນກູ້ ທີ່ຖືກຜົນກະທົບຈາກສະພາບການລະບາດຂອງພະຍາດອັກເສບປອດຈາກເຊື້ອຈຸລາໂລກ ສາຍພັນໃໝ່ (Covid-19)

### ປະຈຳເດືອນ.......

**ຕາຕະລາງ 4: ແບບຟອມລາຍງານລູກຄ້າເງິນກູ້ ທີ່ໄດ້ຂໍນະໂຍບາຍສິນເຊື່ອຕາມຂໍ້ຕົກລົງ 238/ທຫລ ແຕ່ບໍ່ໄດ້ຮັບນະໂຍບາຍສິນເຊື່ອຈາກທະນາຄານ.**

**ຫົວໜ່ວຍ: ເຕັມ**

| 1 | 2 | 3 | 4 | | | | | 5 | 6 | 7 | 8 | 9 | 10 | 11 | 12 |
|---|---|---|---|---|---|---|---|---|---|---|---|---|---|---|---|
| ລຳດັບ | ວັນ ເດືອນ ປີ (ລູກຄ້າໄດ້ມາພົວພັນຂໍນະໂຍບາຍສິນເຊື່ອ) | ຊື່ລູກຄ້າ | ຍອດເຫຼືອຕົ້ນທຶນ | | | | | ຍອດເຫຼືອດອກເບ້ຍ ລວມທັງໝົດທຽບເທົ່າກີບ | ສຳນັກງານໃຫຍ່ ຫຼື ສາຂາ | ເປົ້າໝາຍການນຳໃຊ້ເງິນກູ້ (ລະບຸໃຫ້ຊັດເຈນ) | ປະເພດທຸລະກິດ (ລະບຸໃຫ້ຊັດເຈນ) | ຈັດຊັ້ນໜີ້ | ເຫດຜົນທີ່ບໍ່ສາມາດໃຫ້ນະໂຍບາຍສິນເຊື່ອ | ເນື້ອໃນນະໂຍບາຍທີ່ລູກຄ້າສະເໜີ | ໝາຍເຫດ (ກໍລະນີເປັນລູກຄ້າໃໝ່ ແມ່ນໃຫ້ລະບຸວ່າ "ລູກຄ້າໃໝ່") |
| | | | ກີບ | ໂດລາ | ບາດ | ເງິນຕາຕ່າງປະເທດສະກຸນອື່ນທຽບເທົ່າກີບ | ລວມທັງໝົດທຽບເທົ່າກີບ | | | | | | | | |
| **I** | | **ເງິນກູ້ໃຫ້ແກ່ບຸກຄົນ** | | | | | | | | | | | | | |
| 1 | | .............................. | | | | | | | | | | | | | |
| 2 | | .............................. | | | | | | | | | | | | | |
| 3 | | .............................. | | | | | | | | | | | | | |
| 4 | | .............................. | | | | | | | | | | | | | |
| 5 | | .............................. | | | | | | | | | | | | | |
| 6 | | .............................. | | | | | | | | | | | | | |
| ລວມ | | | - | - | - | - | - | - | | | | | | | |
| **II** | | **ເງິນກູ້ໃຫ້ແກ່ນິຕິບຸກຄົນ** | | | | | | | | | | | | | |
| 1 | | .............................. | | | | | | | | | | | | | |
| 2 | | .............................. | | | | | | | | | | | | | |
| 3 | | .............................. | | | | | | | | | | | | | |
| 4 | | .............................. | | | | | | | | | | | | | |
| 5 | | .............................. | | | | | | | | | | | | | |
| 6 | | .............................. | | | | | | | | | | | | | |
| ລວມ | | | - | - | - | - | - | - | | | | | | | |
| ລວມທັງໝົດ | | | - | - | - | - | - | - | | | | | | | |

ໝາຍເຫດ:

1. ຖັນທີ (2) ແມ່ນໃຫ້ລາຍງານວັນເດືອນປີ ທີ່ລູກຄ້າຂຽນໜັງສືສະເໜີເຖິງທະນາຄານ ເພື່ອຂໍນະໂຍບາຍສິນເຊື່ອຈາກທະນາຄານ.
2. ຖັນທີ (4 ແລະ 5) ແມ່ນໃຫ້ລາຍງານຂໍ້ມູນ ທີ່ທະນາຄານໄດ້ຮັບໜັງສືສະເໜີຈາກລູກຄ້າ ເພື່ອຂໍນະໂຍບາຍສິນເຊື່ອຈາກທະນາຄານ. (ຕົວຢ່າງ: ໃນເດືອນ ພຶດສະພາ 2021 ທະນາຄານໄດ້ຮັບໜັງສືສະເໜີຈາກລູກຄ້າ ແມ່ນໃຫ້ລາຍງານຂໍ້ມູນລູກຄ້າຮອດທ້າຍເດືອນດັ່ງກ່າວ).
3. ຖັນທີ (8) ປະເພດທຸລະກິດ ໝາຍເຖິງທຸລະກິດຂອງລູກໜີ້ ເຊັ່ນ: ໂຮງແຮມ, ຮ້ານອາຫານ, ຮ້ານບັນເທີງ, ຮ້ານຄາຣາໂອເກະ, ຮ້ານບໍລິການນວດ-ສະປາ, ສະຖານທີ່ອອກກຳລັງກາຍ-ຫຼິ້ນກິລາໃນຮົ່ມ, ໂຮງຮູບເງົາ, ຮ້ານຕັດຜົມ, ຮ້ານເສີມສວຍ, ສູນການຄ້າ, ຮ້ານຄ້າຂາຍຍົກ-ຮ້ານຄ້າຂາຍຍ່ອຍ, ຮ້ານຊຸບເປີມາເກັດ, ຮ້ານກາເຟ, ຮ້ານສ້ອມແປງລົດ, ຮ້ານລ້າງອັດສີດ, ໂຮງງານນ້ຳດື່ມ ແລະ ອື່ນໆ;
4. ຖັນທີ (10) ແມ່ນໃຫ້ທະນາຄານລາຍງານເຫດຜົນ ທີ່ທະນາຄານບໍ່ສາມາດໃຫ້ນະໂຍບາຍເງິນເຊື່ອແກ່ລູກຄ້າແຕ່ລະລາຍ.
5. ຖັນທີ (11) ເນື້ອໃນນະໂຍບາຍທີ່ລູກຄ້າສະເໜີ ແມ່ນໃຫ້ທະນາຄານລະບຸຕົວເລກ (ເລກ 1 ເຖິງ 5) ຄື: ເລກ 1 ໝາຍເຖິງເລື່ອນເວລາຊຳລະໜີ້ທັງຕົ້ນທຶນ ແລະ ດອກເບ້ຍ; ເລກ 2 ໝາຍເຖິງປັບຫຼຸດອັດຕາດອກເບ້ຍ; ເລກ 3 ໝາຍເຖິງປັບຫຼຸດຄ່າທຳນຽມ; ເລກ 4 ໝາຍເຖິງ ສະໜອງເງິນກູ້ບ້ວງໃໝ່; ແລະ ເລກ 5 ໝາຍເຖິງອື່ນໆ (ຊຶ່ງເລກ 5 ນີ້ ທະນາຄານຕ້ອງຂຽນເນື້ອໃນໃສ່ພ້ອມ).
5. ຖັນທີ (12) ກໍລະນີມີລູກຄ້າໃໝ່ ຂຽນໜັງສືສະເໜີຂໍກູ້ຢືມເງິນ ເພື່ອຟື້ນຟູທຸລະກິດ (ຕາມທີ່ໄດ້ລະບຸໄວ້ໃນຂໍ້ຕົກລົງ 238/ທຫລ) ແມ່ນໃຫ້ທະນາຄານລະບຸວ່າເປັນ "ລູກຄ້າໃໝ່". ພ້ອມທັງປະກອບຂໍ້ມູນ ໃສ່ຖັນທີ 1, 2, 3, 7, 8 ແລະ 10 ໃຫ້ຄົບ.
6. ການລາຍງານຂໍ້ມູນໃນຕາຕະລາງນີ້ ແມ່ນໃຫ້ລາຍງານລູກຄ້າທັງໝົດ ທີ່ຍື່ນໜັງສືສະເໜີຂໍນະໂຍບາຍ ແຕ່ບໍ່ໄດ້ຮັບການປະຕິບັດນະໂຍບາຍສິນເຊື່ອຈາກທະນາຄານ (ລາຍງານຕົວເລກສະສົມ).

<u>**ຜູ້ອຳນວຍການ**</u>